## ເອົາຂໍ້ມູນນີ້ໃຫ້ທ່ານຫມໍຂອງທ່ານເບິ່ງ.

ເຖິງທ່ານຫມໍ:

ຄົນ (ເຈັບ) ຂອງທ່ານຢູ່ໃນຈຳນວນຈຳພວກສ່ຽງເປັນໂຣຄຕັບເຣໄທທິສ "B" ຫນັກ. ກະຣຸນາທົດສອບແລະສັກຢາປ້ອງກັນໂຣຄຕັບເຣພາໄທທິສ "B" ໃຫ້ຄົນເຈັບຂອງທ່ານດ້ວຍ.

ວິທີການທົດສອບດັ່ງຕໍ່ໄປນີ້ສາມາດໃຊ້ໄດ້ເພື່ອຄຳນວນເບິ່ງສະພາວະການຂອງຄົນປ່ວຍ:

- ຊນິດມີການຜລິດເຊື້ອຕ້ານທານນອກຮ່າງກາຍຕໍ່ໂຣຄຕັບເຣພາໄທທິສ "B" (hepatitis B surface antigen (HBsAg) ແລະ
- ຊນິດມີພູມທາດຕ້ານທານໃນຮ່າງກາຍຕໍ່ໂຣຄຕັບເຣພາໄທທິສ "B" (hepatitis B core antibody (anti-HBc)

ຫລືບໍ່ກໍໃຫ້ໃຊ້:

- ຊນິດມີການຜລິດເຊື້ອຕ້ານທານນອກຮ່າງກາຍຕໍ່ໂຣຄຕັບເຣພາໄທທິສ "B" (hepatitis B surface antigen (HBsAg) ແລະ
- ຊນິດມີພູມທາດຕ້ານທານນອກຮ່າງກາຍຕໍ່ໂຣຄຕັບເຣພາໄທທິສ "B" (hepatitis B surface antibody (anti-HBs)

ກະຣຸນາເອົາໂກປີຜົນຂອງການທົດສອບແລະຄາດຮໍບັນທຶກການສີດຢາ (vaccination record card) ໃຫ້ຄົນປ່ວຍຂອງທ່ານດ້ວຍ.

ປະຊາຊົນພົລເມືອງຜູ້ມີເປີເຊັນເປັນໂຣຄຕັບເຣພາໄທທິສ "B" ສູງ ແມ່ນມາຈາກອາຟຣິກາ, ເອເຊັຍ, ຢູໂຣບຕາວັນອອກ, ຕາວັນອອກ ກາງ, ປະເທດທາງໃກ້ຕາວັນອອກ, ທົ່ງຮາບອາມາໂຊນ, ເກາະປາຊີຟິກ, ແລະເຂດຊົນນະບົດອາລາສກາ.

ດັ່ງທ່ານຮູ້ຈັກດີ, ໂຣຄຕັບເຣພາໄທທິສ "B" ສາມາດເປັນເຫດໃຫ້ເສັຽຕັບ (ຕັບບໍ່ທຳງານ), ໂຣຄມະເຮງຕັບ, ແລະເສັຽຊີວິດ.

ຖ້າທ່ານຕ້ອງການຣາຍລະອຽດເພີ່ມເຕີມຈາກອົງການຮ່ວມປິ່ນປົວໂຣຄຕັບເຣພາໄທທິສ "B" (Hepatitis B Coalition) ເຊີນຕິດຕໍ່ກັບພວກເຮົາໄດ້. ພວກເຮົາມີບ່ອນເອົາຂໍ້ມູນຫຼາຍບ່ອນສຳຣັບຫມໍປະຈຳຄລີນິກ. ພວກເຮົາພິມຫນັງສືພິມນ້ອຍ (ນິວສ໌ເລເທີ) ແຈກຟຣີສຳຣັບ ທ່ານຫມໍແລະພະແນກສາທາຣະນະສຸຂກ່ຽວກັບໂຣຄຕັບເຣພາໄທທິສ "B" ພ້ອມກັບເຣື່ອງການສີດຢາໃຫ້ເດັກນ້ອຍແລະຜູ້ ໃຫຍ່ອື່ນໆ.

ດ້ວຍຄວາມຈິງໃຈ,

Deborah L. Wexler MD

ທ່ານຫມໍ Deborah L. Wexler
ຜູ້ອຳນວຍການອົງການ Hepatitis B Coalition
1573 Selby Ave., #234, St. Paul, MN 55104

---

ຖ້າຢາກຮູ້ວ່າທ່ານເປັນໂຣຄຕັບເຣພາໄທທິສ "B" ຫລືບໍ່ແລ້ວໃຫ້ທ່ານຖືເອົາພັບນ້ອຍຫົວນີ້ໄປຫາທ່ານຫມໍຂອງທ່ານແລະຂໍໃຫ້ເຂົາເອົາເລືອດຂອງທ່ານໄປກວດເບິ່ງ.

---

Hepatitis B Coalition
Immunization Action Coalition
1573 Selby Avenue, Suite 234
St. Paul, MN 55104
651-647-9009
www.immunize.org

ອົງການຮ່ວມປິ່ນປົວໂຣຄຕັບເຣພາໄທທິສ "B" (Hepatitis B Coalition) ສົ່ງເສີມການສີດຢາໃຫ້ເດັກນ້ອຍທຸກຄົນພ້ອມກັບຜູ້ໃຫຍ່; ກວດແລະທົດສອບໂຣຄຕັບເຣພາໄທທິສ "B" ໃຫ້ຜູ້ຍິງຖືພາທຸກຄົນ; ທົດສອບແລະສີດຢາໃຫ້ກຸ່ມຄນະທີ່ສ່ຽງມີເປີເຊັນສູງ; ແລະໃຫ້ຄວາມຮູ້ແລະປິ່ນປົວຜູ້ທີ່ຖືເຊື້ອໂຣຄເຣພາໄທທິສບີ. ອົງການຮ່ວມປິ່ນປົວໂຣຄຕັບເຣພາໄທທິສ "B" (Hepatitis B Coalition) ແມ່ນໂຄງການຫນຶ່ງຂອງອົງການຮ່ວມການສັກຢາປ້ອງກັນໂຣຄ (Immunization Action Coalition).

ຮູບແຕ້ມໄດ້ຮັບອະນຸຍາດພິມລົງຈາກປຶ້ມ *Hands Around The World* ໂດຍ Susan Milord © 1992. Williamson Publishing Co., Charlotte, VT.

Item # P4170-04 Laotian (5/95)

---

## ຖ້າທ່ານ, ພໍ່ແມ່ຫລືລູກຫລານຂອງທ່ານເກີດມາຈາກບ່ອນໃດບ່ອນຫນຶ່ງເຫລົ່ານີ້...

ອັຟການິສຖານ, ອາຟຣິກາ, ຊົນນະບົດ
ອາລາສກາ, ອານບາເນັຽ, ບັງກລາແດສ,
ໂບສເນັຽແລະເຮີກເຊໂກວິນາ, ບູລເກເຣັຽ,
ພະມ້າ, ຂເມັນ, ຈີນ, ຢູໂຣບຕາວັນອອກ,
ຮາຍຕີ, ຮາວາຍ, ອິນເດັຽ, ອິນໂດເນເຊັຽ,
ອີຣານ, ອີຣັກ, ເກົາຫລີ, ລາວ, ມາເລເຊັຽ,
ຕາວັນອອກກາງ, ປາກິສຖານ, ເກາະປາຊີຟິກ,
ຟີລີປິນ, ໂຣມາເນັຽ, ສະຫະພາບໂຊວຽດເກົ່າ,
ທົ່ງຮາບອາມາໂຊນອະເມຣິກາໃຕ້,
ສີລັງກາ, ຊີເຣັຽ, ໄຕ້ຫວັນ, ໄທ, ຫລືວຽດນາມ



## ...ໃຫ້ຖືພັບນ້ອຍຫົວນີ້ໄປຫາທ່ານຫມໍຂອງທ່ານແລະຂໍໃຫ້ຫມໍກວດຄົ້ນເບິ່ງວ່າທ່ານເປັນໂຣຄຕັບເຣພາໄທທິສ "B" ຫລືບໍ່.

## ໂຣຄຕັບເຣພາໄທທິສ "B" ແມ່ນຫຍັງ?

ໂຣຄຕັບເຣພາໄທທິສ "B" ແມ່ນພຍາດຮ້າຍແຮງຊນິດຫນຶ່ງຊຶ່ງເກີດມາຈາກເຊື້ອໄວຣັສ. ເຊື້ອໄວຣັສນີ້ສາມາດເຂົ້າໄປຢູ່ໃນກະແສເລືອດແລະກິນຕັບ. ໂຣຄຕັບເຣພາໄທທິສ "B" ສ່ວນຫລາຍເປັນກັບປະຊາຊົນຜູ້ອາສັຍຫລືເກີດຢູ່ໃນຂົງເຂດຂອງໂລກຊຶ່ງມີບັນຊີຢູ່ຫນ້າປົກ. ຖ້າຜູ້ໃດຜູ້ຫນຶ່ງທີ່ທ່ານຮູ້ຈັກເຂົາ ເປັນພຍາດຕັບເຣພາໄທທິສ "B" ຕັບຂອງລາວຈະບໍ່ທຳງານຫນັກຂຶ້ນໄປເລື້ອຍໆຫລືເປັນມະເຮງຕັບ.

## ທ່ານຈະຮູ້ໄດ້ຢ່າງໃດວ່າທ່ານເປັນໂຣຄຕັບເຣພາໄທທິສ "B"?

ມັນມີຄວາມສຳຄັນຕ້ອງຮູ້ຈັກໄວ້ຖ້າທ່ານເປັນໂຣຄຕັບເຣພາໄທທິສ "B". ຄົນເປັນຈຳນວນລ້ານໆຄົນຢູ່ໃນໂລກຕິດເຊື້ອໄວຣັສຊນິດນີ້. ຫລາຍໆຄົນບໍ່ມີອາການເຈັບເປັນຫຍັງເລີຍທາກແຕ່ວ່າຈະເກີດເປັນພະຍາດຕັບຢ່າງຮ້າຍແຮງຫລັງຈາກຫລາຍໆປີຕໍ່ມາທີ່ເຈັບເປັນຢ່າງງຽບໆ. ທົນທາງດຽວທີ່ຈະຮູ້ວ່າທ່ານເປັນໂຣຄຕັບເຣພາໄທທິສ "B" ກໍຄືຕ້ອງເອົາເລືອດຂອງທ່ານໄປກວດຫລືທົດສອບເບິ່ງ. ການທົດສອບເລືອດດັ່ງກ່າວຈະບອກທ່ານໄດ້ວ່າສະພາວະການເປັນໂຣຄຕັບເຣພາໄທທິສ "B" ໄດ້ດັ່ງຕໍ່ໄປນີ້:

**ສາມາດເປັນຫລືຕິດໄດ້ (Susceptible):** ທ່ານສາມາດຕິດໂຣຄຕັບເຣພາໄທທິສ "B" ໄດ້. ນີ້ກໍຫມາຍຄວາມວ່າທ່ານບໍ່ເຄີຍເປັນພະຍາດນີ້ມາແຕ່ກ່ອນ. ແຕ່ທ່ານສາມາດຕິດໄດ້ໃນອານາຄົດຂ້າງຫນ້າ. ຖ້າວ່າທ່ານອາດສາມາດຕິດໄດ້ ທ່ານກໍຄວນສີດຢາປ້ອງກັນໄວ້ເພື່ອບໍ່ໃຫ້ຕິດໂຣຄຕັບເຣພາໄທທິສ "B".

---

ຖ້າທ່ານສາມາດຕິດໂຣຄຕັບເຣພາໄທທິສ "B" ໄດ້
ສັກຢາສາມເທື່ອຈະປ້ອງກັນທ່ານໄດ້!

---

**ຮ່າງກາຍມີທາດຖຸມຕ້ານທານ (Immune):** ຖ້າວ່າທ່ານມີທາດຕ້ານທານໂຣຄຕັບເຣພາໄທທິສ "B", ທ່ານເຄີຍຕິດເຊື້ອໂຣຄນີ້ມາກ່ອນໃນອະດີດ. ຮ່າງກາຍຂອງທ່ານມີຄວາມສາມາດຂ້າເຊື້ອໄວຣັສຊຶ່ງຈະພາໃຫ້ເກີດເຈັບເປັນຂຶ້ນມາໄດ້. ທ່ານຈະປອດພັຍຈາກໂຣຄຕັບເຣພາໄທທິສ "B" ແລະບໍ່ສາມາດເປັນພະຍາດນີ້ອີກ.

**ມີຫລືຖືເຊື້ອໄວຣັສຕິດຕົວໄວ້ (Carrier):** ຖ້າທ່ານເປັນໂຣຄຕັບເຣພາໄທທິສ "B" ກໍຫມາຍຄວາມວ່າທ່ານມີຫລືຕິດເຊື້ອໄວຣັສ. ຕາມປົກກະຕິທ່ານຈະບໍ່ຮູ້ສຶກເຈັບເປັນຫຍັງເລີຍ ທາກແຕ່ວ່າທ່ານສາມາດຖອດເທຫລືສົ່ງຕໍ່ໄປໃຫ້ຄົນອື່ນໄດ້. ທ່ານຈຳຕ້ອງໄດ້ຢູ່ພາຍໃຕ້ການຮັກສາຈາກຫມໍແລະຕ້ອງໃຫ້ຫມໍກວດເປັນປະຈຳເພື່ອບໍ່ໃຫ້ການເຈັບຕັບຂອງທ່ານຫນັກຫນ້າອີກຕໍ່ໄປ.

## ທ່ານສາມາດເປັນໂຣຄຕັບເຣພາໄທທິສ "B" ໄດ້ແບບໃດ?

ມີຢູ່ຫລາຍໆທົນທາງ. ໂຣຄຕັບເຣພາໄທທິສ "B" ຕິດຕໍ່ຫາກັນໄດ້ດ້ວຍເລືອດທີ່ມີເຊື້ອຫລືສິ່ງທີ່ເປັນນ້ຳຕາມຮ່າງກາຍ. ທົນທາງບາງຢ່າງທີ່ມັກເປັນຫລາຍກວ່າໝູ່ກໍຄື:

- ຈາກແມ່ໄປຫາທາຣົກເວລາເກີດອອກມາ
- ຮ່ວມເພດ (ເສບກາມ)
- ແຕະຕ້ອງຫລືສຳພັດກັບເລືອດຜູ້ໃດຜູ້ຫນຶ່ງ
- ໃຊ້ແປງຖູແຂ້ວຫລືມີດແຖຫນວດຮ່ວມກັນ
- ຫຍ້ຳເຂົ້າໃຫ້ລູກນ້ອຍກິນ
- ກັດຫຍ້ຳ
- ໃຊ້ເຂັມທີ່ບໍ່ໄດ້ຂ້າເຊື້ອໂຣຄສຳຣັບຊີ(ບ່ອງ)ຫູ, ເຂັມສັກຢາເສບຕິດ, ການຝັງເຂັມຕາມແຜນບູຮານ, ຫລືສັກລາຍ
- ຢູ່ກິນຮ່ວມກັບຜູ້ເປັນໂຣຄຕັບເຣພາໄທທິສ "B".

ໂຣຄຕັບເຣພາໄທທິສ "B" ບໍ່ແຜ່ພາຍອອກໄປເວລາຈາມ, ໄອ ຫລືຈັບມືຖືແຂນກັນ.

## ມີຢາຮັກສາໂຣຄຕັບເຣພາໄທທິສ "B" ບໍ່?

ຖ້າຜູ້ໃດຜູ້ຫນຶ່ງເຈັບຕັບຍ້ອນໂຣຄຕັບເຣພາໄທທິສ "B", ມີຢາຊນິດຫນຶ່ງຊຶ່ງເອີ້ນວ່າ "ອິນເທີເຟຣອນ" (interferon) ຊຶ່ງບາງເທື່ອສາມາດຊ່ວຍບຸກຄົນນັ້ນໄດ້. ຢາປິ່ນປົວນີ້ສາມາດເຮັດໃຫ້ແພ້ຢາ ແລະໃຊ້ແຕ່ໃນສະເພາະເວລາໃດການທົດສອບເລືອດຂອງບຸກຄົນຜູ້ປ່ວຍນັ້ນຊີ້ໃຫ້ເຫັນວ່າບາດເຈັບຕັບ. ຄົນສ່ວນຫລາຍຊຶ່ງຖືເຊື້ອໂຣຄຕັບເຣພາໄທທິສ "B" ບໍ່ຈຳເປັນຕ້ອງການຢາຊນິດນີ້ ແລະດຳເນີນຊີວິດຢູ່ຢ່າງມີສຸຂພາບແຂງແຮງທັມມະດາ.

ຖ້າທ່ານເປັນຜູ້ມີເຊື້ອໂຣຄຕັບເຣພາໄທທິສ "B" ຢູ່ແລ້ວ ແຕ່ລະປີທ່ານຄວນໄປຫາຫມໍເພື່ອກວດຮ່າງກາຍແລະກວດເລືອດເພື່ອຄວບຄຸມເບິ່ງການເດີນຕັບຂອງທ່ານແລະສ່ອງຫາເບິ່ງການເປັນມະເຮງຕັບໃຫ້ຮູ້ໄວ້ແຕ່ຫົວທີ.

ຜູ້ຖືເຊື້ອໂຣຄຕັບເຣພາໄທທິສ "B" ບໍ່ຄວນກິນເຫລົ້າ ແລະຕ້ອງໃຫ້ ສະມາຊິກທຸກຄົນໃນຄອບຄົວແລະຄູ່ຮ່ວມເພດຂອງຕົນໄປສັກຢາປ້ອງກັນພະຍາດນີ້ໄວ້.

ນັກຄົ້ນຄວ້າກຳລັງຊອກຫາວິທີແລະຢາປິ່ນປົວຮັກສາບຸກຄົນຜູ້ເປັນໂຣຄຕັບເຣພາໄທທິສ "B" ນີ້ເພີ່ມອີກຕໍ່ໄປ.

## ຂ້ອຍໄປກວດສອບແລະສັກຢາເຣພາໄທທິສ "B" ຢູ່ບ່ອນໃດໄດ້ແດ່?

ໄປກວດກັບທ່ານຫມໍຂອງທ່ານເບິ່ງ. ຖ້າທ່ານບໍ່ມີປະກັນພັຍສຸຂພາບຫລືປະກັນສຸຂພາບບໍ່ຈ່າຍຄ່າກວດສອບແລະສັກຢາໃຫ້ທ່ານແລ້ວ, ຄອບຄົວຂອງທ່ານອາດໄດ້ຮັບການກວດສອບແລະສັກຢາທີ່ບໍ່ຕ້ອງໄດ້ເສັຽຄ່າຈາກພະແນກສາທາຣະນະສຸຂຂອງເມືອງ (ຊີຕີ) ຫລືຂອງຄາວຕີຂອງທ່ານ. ເຊີນໂທຣະສັບຫາພະແນກສາທາຣະນະສຸຂທ້ອງຖິ່ນຂອງທ່ານເພື່ອໄດ້ຮາຍລະອຽດເພີ່ມເຕີມ.